# ເສັ້ນທາງການສົນທະນາລະຫວ່າງອະລິຍະທຳ ເຮັດໃຫ້ມິດຕະພາບ ລາວ-ຈີນ ນັບມື້ແໜ້ນແຟ້ນ



ຫວ່າງມໍ່ໆມານີ້, ກອງປະຊຸມລະດັບລັດຖະມົນຕີ ວ່າດ້ວຍການສົນທະນາ ລະຫວ່າງ ອະລິຍະທຳທົ່ວໂລກ ໄດ້ຈັດຂຶ້ນຢູ່ນະຄອນຫຼວງປັກກິ່ງ ສປ ຈີນ ພາຍໃຕ້ຫົວຂໍ້ "ປົກປັກຮັກສາຄວາມຫຼາກຫຼາຍດ້ານອະລິຍະທຳຂອງມວນມະນຸດ ແລະ ຮ່ວມກັນຊຸກຍູ້ສັນຕິພາບ ແລະ ການພັດທະນາທົ່ວໂລກ". ອະລິຍະທຳທົ່ວໂລກ ມີຫຼາກຫຼາຍສີສັນ. ຢູ່ແຂວງຢຸນນານ ທາງພາກຕາເວັນຕົກສ່ຽງໃຕ້ຂອງຈີນ, ທູດມິດຕະພາບ ໄດ້ເດີນທາງຈາກແຫ່ງນີ້ ເພື່ອສົ່ງຄຳຢື້ຢາມຖາມຂ່າວອັນອົບອຸ່ນ ຕໍ່ປະເທດອ້ອມຂ້າງ ເຊິ່ງລວມທັງປະເທດລາວ. ການທ່ອງທ່ຽວມໍລະດົກໂລກ ຕາມແຂວງຢຸນນານຈີນ ແລະ ປະເທດລາວ ໄດ້ເຮັດໃຫ້ນັກທ່ອງທ່ຽວປະເທດຕ່າງໆ ຮັບຮູ້ອະລິຍະທຳຂອງສອງປະເທດ; ນັກທ່ອງທ່ຽວຈາກປະເທດຕ່າງໆ ໄດ້ຂີ່ລົດໄຟໂດຍສານສາກົນຕາມທາງລົດໄຟ ລາວ-ຈີນ ເຊິ່ງໄດ້ຜູກມິດສຳພັນເຊິ່ງກັນ ແລະ ກັນ; ການຮ່ວມມືດ້ານກະສິກຳລະຫວ່າງ ແຂວງຢຸນນານ ກັບປະເທດລາວ ໄດ້ສ້າງຜົນປະໂຫຍດໃຫ້ແກ່ປະຊາຊົນສອງປະເທດ ນັບມື້ນັບຫຼາຍຂຶ້ນ.

### ການທ່ອງທ່ຽວທີ່ສາມາດເຮັດໃຫ້ນັກທ່ອງທ່ຽວນັບມື້ນັບຫຼາຍຮັບຮູ້ເຖິງມໍລະດົກໂລກ

ຫວ່າງມໍ່ໆມານີ້, ກອງປະຊຸມລະດັບລັດຖະມົນຕີ ວ່າດ້ວຍການສົນທະນາ ລະຫວ່າງ ອະລິຍະທຳທົ່ວໂລກທີ່ຈັດຂຶ້ນຢູ່ນະຄອນຫຼວງປັກກິ່ງ ສປ ຈີນ ໄດ້ເຜີຍແຜ່ "ບັນຊີລາຍຊື່ແຜນປະຕິບັດງານ", "ແຜນການທ່ອງທ່ຽວມໍລະດົກໂລກ" ທີ່ລິເລີ່ມສົ່ງເສີມໂດຍແຂວງຢຸນນານຈີນຖືກຈັດເຂົ້າໃນບັນຊີລາຍຊື່ດັ່ງກ່າວ.

ການທ່ອງທ່ຽວມໍລະດົກໂລກ ໄດ້ຮັບຄວາມນິຍົມຊົມຊອບ ຈາກນັກທ່ອງທ່ຽວນັບມື້ນັບຫຼາຍຂຶ້ນຍ້ອນມີຄວາມສະເໜ່ດ້ານວັດທະນະທຳ ແລະ ຄຸນຄ່າທາງປະຫວັດສາດຂອງຕົນ. ເດືອນພະຈິກ 2024, ແຂວງຢຸນນານ ໄດ້ລິເລີ່ມ "ແຜນການທ່ອງທ່ຽວມໍລະດົກໂລກ". ທ່ານ ສຸລິເດດ ຜູ້ນຳທ່ຽວລາວ ໄດ້ເດີນທາງຈາກນະຄອນຫຼວງພະບາງ ມານະຄອນຄຸນໝິງ ເພື່ອເຂົ້າຮ່ວມກິດຈະກຳດັ່ງກ່າວ.

ທ່ານ ສຸລິເດດ ທີ່ເຄີຍມາຮຽນຕໍ່ຢູ່ຈີນ ໄດ້ນຳເອົາສິ້ນທີ່ເປັນເຄື່ອງນຸ່ງປະເພນີຂອງລາວມາເຂົ້າຮ່ວມກິດຈະກຳເປັນພິເສດ. ທ່ານ ກ່າວວ່າ: "ທ່ານເບິ່ງແມ່, ລວດລາຍປານຮອຍນ້ຳນີ້ເປັນເທວະດາເຝົ້າຮັກສາແມ່ນ້ຳຂອງ." ທ່ານ ໄດ້ຈັບບາຍລວດລາຍຮູບພະຍານາກ ຕີນສິ້ນ ແລະ ຮູ້ສຶກມີຄວາມພາກພູມໃຈຫຼາຍ. ລວດລາຍຮູບພະຍານາກ ໄດ້ຖືກຈັດເຂົ້າໃນບັນຊີລາຍຊື່ມໍລະດົກວັດທະນະທຳນາມມະທຳໂລກ ມາເປັນເວລາຫຼາຍປີແລ້ວ ເຊິ່ງໄດ້ດຶງດູດຄວາມສົນໃຈຈາກຄົນທັງຫຼາຍນັບມື້ນັບຫຼາຍຂຶ້ນ.

ເມື່ອເຜີຍແຜ່ເສັ້ນທາງທ່ອງທ່ຽວໜ້າອັດສະຈັນ ລາວ-ຈີນ, ທ່ານ ສຸລິເດດ ສາວັນພອນ ສົນໃຈເປັນພິເສດ, ທ່ານ ກ່າວວ່າ: "ເສັ້ນທາງທ່ອງທ່ຽວດັ່ງກ່າວຕ້ອງຜ່ານນະຄອນຫຼວງພະບາງ. ຫຼັງຈາກນະຄອນຫຼວງພະບາງຖືກຈັດເຂົ້າໃນບັນຊີລາຍຊື່ມໍລະດົກໂລກແລ້ວ, ນັກທ່ອງທ່ຽວປະເທດຕ່າງໆ ໄດ້ເຂົ້າມາທ່ຽວນະຄອນຫຼວງພະບາງ ເປັນຈຳນວນຫຼວງຫຼາຍ, ຊີວິດການເປັນຢູ່ຂອງປະຊາຊົນນະຄອນຫຼວງພະບາງ ກໍນັບມື້ນັບດີຂຶ້ນ." ທ່ານ ເຫັນວ່າ: ຂະແໜງການທ່ອງທ່ຽວ ແລະ ການອະນຸລັກມໍລະດົກ ໄດ້ຊ່ວຍຊຸກຍູ້ໜູນກັນ ແລະ ເຮັດໃຫ້ການພົວພັນ ລະຫວ່າງແຂວງຢຸນນານ ກັບບັນດາປະເທດອ້ອມຂ້າງ ນັບມື້ນັບແໜ້ນແຟ້ນກວ່າເກົ່າ.

ໜຶ່ງປີກ່ອນມານີ້, ແຂວງຢຸນນານໄດ້ເປີດເສັ້ນທາງທ່ອງທ່ຽວຮ່ວມກັບລາວ, ກຳປູເຈຍ, ໄທ, ມາເລເຊຍ, ອິນໂດເນເຊຍ ແລະ ຊາອຸດິ ອາຣາບີ, ປີນີ້ຍັງໄດ້ເປີດເສັ້ນທາງທ່ອງທ່ຽວຮ່ວມກັບສີລັງກາ ແລະ ບັງກລາເດັດອີກ.

ທ່ານ ວັນສີ ກິວມົວ ຮອງລັດຖະມົນຕີ ກະຊວງວັດທະນະທຳ ແລະ ການທ່ອງທ່ຽວ ແຫ່ງ ສປປ ລາວ ກ່າວວ່າ: "ກອງປະຊຸມລະດັບລັດຖະມົນຕີ ວ່າດ້ວຍການສົນທະນາ ລະຫວ່າງອະລິຍະທຳທົ່ວໂລກ ເຮັດໃຫ້ລາວ ມີໂອກາດຮັບຮູ້ ແລະ ຖອດຖອນບົດຮຽນຈາກອະລິຍະທຳ ທີ່ມີຫຼາກຫຼາຍສີສັນຂອງປະເທດຕ່າງໆຕື່ມອີກ ເຊິ່ງໄດ້ສະໜອງຄວາມຄິດຄວາມເຫັນ ແລະ ຊີ້ນຳການພັດທະນາພາລະກິດວັດທະນະທຳ ແລະ ທ່ອງທ່ຽວຂອງລາວ ຕື່ມອີກ." ທ່ານ ກ່າວຕື່ມອີກວ່າ: ລາວຖືອຸດສາຫະກຳວັດທະນະທຳ ແລະ ທ່ອງທ່ຽວ ເປັນໜຶ່ງໃນອຸດສາຫະກຳເສົາຄ້ຳ ຂອງເສດຖະກິດແຫ່ງຊາດລາວ, ພວມໄດ້ປະຕິບັດນະໂຍບາຍ ແລະ ມາດຕະການຕ່າງໆ ເຊິ່ງລວມທັງການກໍ່ສ້າງພື້ນຖານໂຄງລ່າງ, ການພັດທະນາອຸດສາຫະກຳທ່ອງທ່ຽວ ຢ່າງຍືນຍົງ ແລະ ການອະນຸລັກສືບທອດວັດທະນະທຳ.

### ການຟ້ອນລຳທຳເພັງເຮັດໃຫ້ການໄປມາຫາສູ່ກັນ ນັບມື້ນັບແໜ້ນແຟ້ນກວ່າເກົ່າ

"ມາເດີ້, ພວກເຮົາມາຟ້ອນລຳທຳເພັງກັນ, ມາເດີ້, ພວກເຮົາມີຄວາມໃກ້ຊິດສະໜິດສະໜົມກັນ." ວັນທີ 14 ມັງກອນ 2025, ກິດຈະກຳວັດທະນະທຳບຸນກຸດຈີນ ພາຍໃຕ້ຫົວຂໍ້ "ຮ້ອງເພງຢ່າງມ່ວນຊື່ນ ແລະ ຮັກແພງກັນຕະຫຼອດທາງ" ໄດ້ຈັດຂຶ້ນຢູ່ຕາມຂະບວນລົດໄຟໂດຍສານສາກົນ ລາວ-ຈີນ ຢ່າງມ່ວນຊື່ນ. ນາງ ຖິ່ນລຳພອນ ນັກຮ້ອງລາວ ໄດ້ຮ້ອງເພງເຮັດໃຫ້ຄົນທັງຫຼາຍຕິດໃຈນຳ, ລາຍການສະແດງອື່ນໆ ໄດ້ຮັບສຽງຕົບມືດັງໆຈາກຜູ້ຊົມທັງຫຼາຍ.

ຢູ່ໃນຕູ້ລົດໄຟ, ອ້າຍເຕີມູ ລູກຫຼານຜູ້ຕາງໜ້າໃຫ້ຄຳໝັ້ນສັນຍາຕາມສີລາລຶກຄວາມສາມັກຄີ ລະຫວ່າງຊົນເຜົ່າຜູເອີ, ທ່ານ ໂຣເບີດ ເຈົ້າຂອງບລອກການທ່ອງທ່ຽວ ເຢຍລະມັນ, ທ່ານ ຕ້ວນຢູ້ໂປ່ ອາຈານສອນວິທະຍາໄລເຕັກນິກວິຊາຊີບທາງລົດໄຟຄຸນໝິງ ແລະ ທ່ານ ວັນນະພອນ ຄຳພິລົມ ເຈົ້າຂອງບລອກລາວ ໄດ້ເລົ່ານິທານກ່ຽວກັບເສັ້ນທາງລົດໄຟ ລາວ-ຈີນ. ຢູ່ນອກຕູ້ລົດໄຟ, ກິດຈະກຳປະກວດວິດີໂອສັ້ນ ພາຍໃຕ້ຫົວຂໍ້ "ຟັງສຽງແມ່ນ້ຳ", "ກຳລັງກ້າວຂຶ້ນສູ່ລະດັບໃໝ່" ແລະ ອື່ນໆ ໄດ້ເພີ່ມຄວາມສາມັກຄີລະຫວ່າງຊາວໜຸ່ມຈີນ, ລາວ, ມຽນມາ, ກຳປູເຈຍ, ໄທ ແລະ ຫວຽດນາມ ພ້ອມທັງໄດ້ເລົ່າເລື່ອງມິດຕະພາບແມ່ນ້ຳລ້ານຊ້າງ-ແມ່ນ້ຳຂອງ ດ້ວຍສຽງດົນຕີ.

ນາງ ກ່າວວ່າ: "ຂ້າພະເຈົ້າເຄີຍໄປຮຽນຕໍ່ຢູ່ຈີນ, ເທື່ອນີ້ໄດ້ສະຫຼອງບຸນກຸດຈີນແບບພິເສດຢູ່ລາວ, ຂ້າພະເຈົ້າ ບໍ່ພຽງແຕ່ມີເພື່ອນມິດແຂວງຢຸນນານເທົ່ານັ້ນ, ຫາກຍັງໄດ້ເຂົ້າໃຈວັດທະນະທຳ ທີ່ມີມູນເຊື້ອຂອງຈີນໄດ້ດີກວ່າເກົ່າ. ໃນກິດຈະກຳ, ນາງ ແລະ ນາງສຽວຢູ້ ນັກຮ້ອງເຜົ່າລີ້ ໄດ້ໄປເລາະຕະຫຼາດນັດບຸນກຸດຈີນ ນະຄອນຫຼວງວຽງຈັນ, ສອງຄົນໄດ້ຜູກມິດສຳພັນນຳກັນ ຍ້ອນຜ້າແພເຜົ່າລີ້, ສິ້ນລາວ, ນ້ຳຊາ ແລະ ດົນຕີ.

ນີ້ແມ່ນເສັ້ນທາງແຫ່ງຄວາມສຸກ, ເສັ້ນທາງແຫ່ງການພັດທະນາ, ຍິ່ງແມ່ນເສັ້ນທາງມິດຕະພາບ ແລະ ເສັ້ນທາງທີ່ມຸ່ງໜ້າໄປສູ່ອະນາຄົດທີ່ດີງາມ.

ພາຍຫຼັງຂະບວນລົດໄຟໂດຍສານສາກົນ ຕາມເສັ້ນທາງລົດໄຟ ລາວ-ຈີນ ໄດ້ເປີດບໍລິການແຕ່ວັນທີ 13 ເມສາ 2023 ເປັນຕົ້ນມາ, ໄດ້ໃຫ້ການບໍລິການແກ່ຜູ້ໂດຍສານຫຼາຍປະເທດ. ຜູ້ໂດຍສານໄດ້ຊີມກາເຟຢຸນນານ ແລະ ກາເຟລາວ, ຊາຜູເອີຂອງຈີນ ແລະ ຊາພັນປີຂອງລາວ ເຊິ່ງໄດ້ຮັບຮູ້ວັດທະນະທຳທີ່ດີງາມຂອງກັນ ແລະ ກັນ.

ທ່ານ ສະຫວັນຄອນ ຣາຊມຸນຕຣີ ປະທານ ສະມາຄົມນັກຂ່າວລາວ ກໍເຄີຍຂີ່ລົດໄຟ ຕາມເສັ້ນທາງລົດໄຟ ລາວ-ຈີນ. ພາຍຫຼັງໄດ້ອ່ານວາລະສານ "ຈຳປາ" ທີ່ເປັນວາລະສານທີ່ຂຽນດ້ວຍສອງພາສາຄື: ພາສາຈີນ ແລະ ພາສາລາວ ໃນຕູ້ລົດໄຟແລ້ວ, ທ່ານ ກ່າວວ່າ: "ຂໍພຽງແຕ່ຮຽນຕໍ່ໄປ ແລະ ຄົ້ນຄວ້າຕໍ່ໄປ, ກໍຈະສາມາດຮັບເອົາສະຕິປັນຍາ ແລະ ກຳລັງວັງຊາອັນບໍ່ສຸດສິ້ນ ຈາກທຳມະຊາດ ແລະ ຊີວິດການເປັນຢູ່."

### ນາຜືນໜຶ່ງ ເຮັດໃຫ້ປະຊາຊົນໄດ້ຮັບຜົນປະໂຫຍດ

ໃນຊຸມປີຜ່ານມາ, ສະຖາບັນສາກົນຂອງສະຖາບັນຄົ້ນຄວ້າວິທະຍາສາດກະສິກຳແຂວງຢຸນນານໄດ້ຮ່ວມມືກັບວິສາຫະກິດຢຸນນານ, ໄດ້ສ້າງສວນສາທິດວິທະຍາສາດເຕັກໂນໂລຊີກະສິກຳ ລາວ-ຈີນ ທີ່ມີມາດຕະຖານສູງຂະໜາດນ້ອຍຢູ່ບ້ານໝາກມ່ວງ ເມືອງນາຊາຍທອງ ນະຄອນຫຼວງວຽງຈັນ, ຕົ້ນຕໍໄດ້ປູກເຂົ້າປະສົມພັນ 2 ເຮັກຕາ ເພື່ອເຜີຍແຜ່ການນຳໃຊ້ເຕັກໂນໂລຊີໃນນາເຂົ້າ 13 ເຮັກຕາຢູ່ເຂດອ້ອມຂ້າງ, ຝຶກອົບຮົມຊາວນາ ແລະ ວິຊາການ 78 ເທື່ອຄົນ, ໄດ້ຮຽບຮຽງເຕັກນິກຖ່າຍທອດສິດ ທີ່ມີພາສາຈີນ, ພາສາລາວ ແລະ ພາສາອັງກິດ ເພື່ອຊ່ວຍເຫຼືອທ້ອງຖິ່ນດັ່ງກ່າວປັບປຸງລະບົບເຜີຍແຜ່ເຕັກໂນໂລຊີກະສິກຳໃຫ້ສົມບູນຂຶ້ນ.

ໃນລະດູເກັບກ່ຽວ, ຫ້ອງການກະສິກຳ ເມືອງນາຊາຍທອງ ຄາດຄະເນຜົນການເກັບກ່ຽວວ່າ: ສະເລ່ຍແລ້ວ, ຜົນຜະລິດຂອງແນວພັນໃໝ່ ມີເຖິງ 4.764 ກິໂລຕໍ່ເຮັກຕາ ເຊິ່ງໄດ້ເພີ່ມຂຶ້ນຢ່າງຈະແຈ້ງເມື່ອທຽບໃສ່ຜົນຜະລິດຂອງແນວພັນເຂົ້າທຳມະດາແມ່ນ 3.150 ກິໂລຕໍ່ເຮັກຕາ.

ທ່ານ ບຸນຈັນ ກົມບຸນຍະສິດ ຮອງຫົວໜ້າກົມກະສິກຳ ກະຊວງກະສິກຳ-ປ່າໄມ້ລາວ ໄດ້ສະແດງຄວາມຊົມເຊີຍຕໍ່ເລື່ອງນີ້ ໂດຍກ່າວວ່າ: ໂຄງການສວນສາທິດ ໄດ້ຍົກລາຍຮັບຂອງປະຊາຊົນທ້ອງຖິ່ນໃຫ້ສູງຂຶ້ນ ຢ່າງແທ້ຈິງ ແລະ ໄດ້ສ້າງຜົນປະໂຫຍດຕົວຈິງ ໃຫ້ແກ່ປະຊາຊົນທ້ອງຖິ່ນ.

ທ່ານ ປອງດອງ ປະຊາພັກດີ ກົງສຸນໃຫຍ່ ສປປ ລາວ ປະຈຳນະຄອນຄຸນໝິງ ກໍຫວັງຢາກສືບຕໍ່ເພີ່ມທະວີການຮ່ວມມືດ້ານກະສິກຳກັບແຂວງຢຸນນານ. ທ່ານ ກ່າວວ່າ: ປີ 1993 ມາຮຽນຕໍ່ຢູ່ຈີນ, ທຳອິດກໍມາຮຽນຢູ່ຢຸນນານ. "ອາກາດຢຸນນານດີຫຼາຍ, ຊາວຢຸນນານ ກໍເປັນຄົນກັນເອງ, ເໝືອນດັ່ງບ້ານເກີດແຫ່ງທີ 2 ຂອງຂ້າພະເຈົ້າ". ທ່ານ ຕີລາຄາສູງ ຕໍ່ຜະລິດຕະພັນກະສິກຳ ທີ່ມີຄຸນນະພາບດີຂອງຢຸນນານເຊັ່ນ: ເຫັດປ່າຢຸນນານ, ໝາກໜອດ, ໝາກອະໂວກະໂດ, ຊາຢຸນນານ ແລະ ກ່າວວ່າ: ປະເທດລາວ ມີດິນແດນທີ່ກວ້າງໃຫຍ່ໄພສານ ແລະ ມີສະພາບດິນຟ້າອາກາດທີ່ດີ, ສອງຝ່າຍ ດຳເນີນການຮ່ວມມືກັນໃນຂົງເຂດກະສິກຳ ພາຍໃຕ້ຂອບ "ໜຶ່ງແລວ ໜຶ່ງເສັ້ນທາງ" ເຊິ່ງໄດ້ກາຍເປັນເນື້ອໃນສຳຄັນ ໃນການຮ່ວມກັນສ້າງຄູ່ຮ່ວມຊາຕາກຳ ລາວ-ຈີນ.

ຕາມສະຖິຕິ, ນັບມາຮອດປັດຈຸບັນ, ມີວິສາຫະກິດຢຸນນານ 71 ແຫ່ງ ລົງທຶນໃນຂົງເຂດກະສິກຳຢູ່ພາຍໃນປະເທດລາວ. ການຮ່ວມມືດ້ານກະສິກຳລະຫວ່າງ ແຂວງຢຸນນານກັບລາວ ໄດ້ກວມທັງດ້ານຕ່າງໆ ເຊັ່ນ: ສວນສາທິດວິທະຍາສາດເຕັກໂນໂລຊີກະສິກຳ, ການແລກປ່ຽນເຕັກໂນໂລຊີແນວພັນພືດ, ການປຸງແຕ່ງຜະລິດຕະພັນກະສິກຳ, ການວາງມາດຕະຖານ, ການສຶກສາ, ການຝຶກອົບຮົມ ແລະ ອື່ນໆ, ພືດກະສິກຳ ທີ່ສອງຝ່າຍດຳເນີນການຮ່ວມມືກັນມີ: ຢາງພາລາ, ສາລີ, ເຂົ້າປະສົມພັນ, ປູກມອນລ້ຽງມ້ອນ, ສາລີທົນຕໍ່ພະຍາດເຂດຮ້ອນ ແລະ ອື່ນໆ.

(ສະໜອງຂໍ້ມູນໂດຍ: ສູນການສື່ສານສາກົນພາກພື້ນອາຊີໃຕ້-ອາຊີຕາເວັນອອກສ່ຽງໃຕ້ ແຂວງຢຸນນານ)



ynzhanba@163.com
laos.yunnangateway.com